# ຈັນຍາບັນນິຄອນ

## ຄຳນຳ

ຈັນຍາບັນນິຄອນ (ຕໍ່ໄປຈະເອີ້ນວ່າ "ຫຼັກຈັນຍາບັນ") ໝາຍເຖິງ ມາດຕະຖານຫຼັກໃນການປະຕິບັດຕົນສຳລັບ ຜູ້ອຳນວຍການ, ເຈົ້າໜ້າທີ່ບໍລິຫານ ແລະ ພະນັກງານຂອງ ນິຄອນ ຄໍປໍເຣຊັນ ແລະ ບໍລິສັດໃນເຄືອນິຄອນ ທົ່ວໂລກ (ຕໍ່ໄປຈະເອີ້ນວ່າ"ບຸກຄະລາກອນ") ເພື່ອໃຫ້ສອດຄ່ອງກັບປັດຊະຍາທຸລະກິດຂອງນິຄອນ ຄື "ຄວາມໜ້າເຊື່ອຖື ແລະ ສ້າງສັນ" ການປະພຶດປະຕິບັດຕາມຫຼັກຈັນຍາບັນຂອງບຸກຄະລາກອນທຸກຄົນຈະຊ່ວຍສົ່ງເສີມຄວາມຮັບຜິດຊອບຕໍ່ສັງຄົມ ແລະ ການອຸທິດ ໃຫ້ກັບການພັດທະນາສັງຄົມຢ່າງຍືນຍົງ. ບຸກຄະລາກອນທຸກຄົນຕ້ອງມຸ່ງໝັ້ນທີ່ຈະປະຕິບັດຕາມດ້ວຍຄວາມສຸຈະລິດ, ຈິງໃຈ ແລະ ຄວາມເປັນມືອາຊີບ. ຫຼັກຈັນຍາບັນເປັນແນວທາງປະຕິບັດທີ່ອາດບໍ່ໄດ້ບົ່ງບອກເຖິງວິທີການຮັບມືກັບທຸກສະຖານະການ. ຫຼັກຈັນຍາບັນນີ້ມີໄວ້ເພື່ອຊ່ວຍໃຫ້ບຸກຄະລາກອນສາມາດຕັດສິນໃຈໃນເລື່ອງທີ່ກ່ຽວຂ້ອງກັບການປະຕິບັດວຽກງານຂອງຕົນໄດ້ຢ່າງຖືກຕ້ອງຊອບທຳ.

## ຂອບເຂດ

ຫຼັກຈັນຍາບັນນີ້ ບັງຄັບໃຊ້ກັບບຸກຄະລາກອນທຸກຄົນຂອງ "ນິຄອນ" ໃນທີ່ນີ້ໝາຍເຖິງ ນິຄອນ ຄໍປໍເຣຊັນ ແລະ ບໍລິສັດໃນເຄືອ ທົ່ວໂລກ ແລະ "ພວກເຮົາ" ໝາຍເຖິງ ບຸກຄະລາກອນທັງໝົດຂອງນິຄອນ.

## 1. ໜ້າທີ່ ແລະ ຄວາມຮັບຜິດຊອບຕໍ່ຈັນຍາບັນນິຄອນ.

[1] ພວກເຮົາມີໜ້າທີ່ປະຕິບັດຕາມຫຼັກຈັນຍາບັນ ແລະ ນະໂຍບາຍທີ່ກ່ຽວຂ້ອງກັບການປະຕິບັດຕົນໃນການເຮັດວຽກ ແລະ ການດຳເນີນທຸລະກິດເຊິ່ງນິຄອນກຳນົດຂຶ້ນລວມເຖິງກົດໝາຍທີ່ກ່ຽວຂ້ອງ. ພວກເຮົາຕ້ອງດຳເນີນທຸລະກິດຂອງນິຄອນຢ່າງມີຈະລິຍະທຳ ແລະເພື່ອຜົນປະໂຫຍດສູງສຸດຂອງນິຄອນ ຕະຫຼອດເວລາທີ່ເປັນພະນັກງານ ຫຼື ເຮັດວຽກໃຫ້ນິຄອນ.

[2] ຜູ້ອຳນວຍການ, ເຈົ້າໜ້າທີ່ບໍລິຫານ, ຜູ້ຈັດການ ແລະ ຫົວໜ້າຄຸມງານຂອງນິຄອນທຸກຄົນ ຕ້ອງມີຄວາມຮັບຜິດຊອບໃຫ້ການເຮັດວຽກງານເປັນໄປຢ່າງຖືກຕ້ອງ ແລະ ຊອບທຳ, ກະຕືລືລົ້ນໃນການສົ່ງເສີມການສື່ສານໃນທຸກລະດັບພາຍໃນອົງກອນ ແລະ ປະຕິບັດຕົນເປັນຕົວຢ່າງທີ່ດີ, ຊີ້ນຳແລະ ສົ່ງເສີມໃຫ້ຜູ້ອື່ນຍອມຮັບ ແລະ ປະຕິບັດຕາມຫຼັກຈັນຍາບັນ. ນອກຈາກນີ້, ຜູ້ອຳນວຍການ, ເຈົ້າໜ້າທີ່ບໍລິຫານ, ຜູ້ຈັດການ ແລະ ຫົວໜ້າຄຸມງານຂອງນິຄອນທຸກຄົນຍັງມີໜ້າທີ່ໃນການສະໜັບສະໜູນໃຫ້ພະນັກງານເຂົ້າໃຈຫຼັກຈັນຍາບັນອີກດ້ວຍ.

## 2. ເຄົາລົບສິດທິມະນຸດ.

[1] ນິຄອນໄດ້ຮ່ວມລົງນາມໃນຂໍ້ຕົກລົງລະດັບໂລກແຫ່ງ ສະຫະປະຊາຊາດ (UN Global Compact) ແລະ ພວກເຮົາໃຫ້ຄວາມສຳຄັນກັບການມີສ່ວນຮ່ວມດັ່ງກ່າວ. ພວກເຮົາຄຳນຶງເຖິງມາດຕະຖານລະຫວ່າງປະເທດທີ່ກ່ຽວຂ້ອງກັບສິດທິມະນຸດ ແລະ ຈະບໍ່ດຳເນີນການໃດໜຶ່ງ ທີ່ເປັນການລະເມີດສິດທິມະນຸດ.

[2] ພວກເຮົາເຄົາລົບໃນຄວາມຫຼາກຫຼາຍຂອງມະນຸດ ແລະ ຄວາມເປັນເອກະລັກຂອງແຕ່ລະຄົນ ແລະພວກເຮົາຈະບໍ່ດຳເນີນການໃດໜຶ່ງ ທີ່ເປັນການຫຼຸດຜ່ອນສັກສີຄວາມເປັນມະນຸດຂອງແຕ່ລະບຸກຄົນ.

[3] ພວກເຮົາຄັດຄ້ານການໃຊ້ແຮງງານແບບບັງຄັບນາບຂູ່ ແລະ ການໃຊ້ແຮງງານເດັກ ແລະຮຽກຮ້ອງໃຫ້ຜູ້ສະໜອງ ແລະ ຄູ່ຄ້າຂາຍຂອງນິຄອນປະຕິບັດຄືກັນ.

## 3. ສ້າງສະພາບແວດລ້ອມໃນການເຮັດວຽກທີ່ດີ ແລະ ປອດໄພ.

[1] ນິຄອນເຄົາລົບສິດຂັ້ນພື້ນຖານຂອງບຸກຄະລາກອນທຸກຄົນກ່ຽວກັບເສລີພາບໃນການຄົບຄ້າສະມາຄົມຕາມກົດໝາຍ ແລະ ລະບຽບການຂອງແຕ່ລະປະເທດທີ່ນິຄອນດຳເນີນທຸລະກິດຢູ່.

[2] ພວກເຮົາສະໜັບສະໜູນສະພາບແວດລ້ອມການເຮັດວຽກທີ່ຫຼາກຫຼາຍ ແລະ ເປີດກວ້າງ. ພວກເຮົາຍຶດໝັ້ນຮ່ວມກັນວ່າຈະຮັບຟັງຄວາມຄິດເຫັນ ແລະ ຄ່ານິຍົມທີ່ແຕກຕ່າງ ຕາບເທົ່າທີ່ບໍ່ລະເມີດສິດທິຂອງຜູ້ອື່ນ. ພວກເຮົາຈະຮ່ວມກັນສ້າງສະພາບແວດລ້ອມໃນການເຮັດວຽກ ເຊິ່ງອຳນວຍຄວາມສະດວກໃຫ້ກັບພະນັກງານແຕ່ລະຄົນສາມາດສະແດງຄວາມສາມາດຂອງຕົນໄດ້ຢ່າງເຕັມທີ່ ແລະບໍ່ມີການລ່ວງລະເມີດໃນທຸກຮູບແບບ.

[3] ພວກເຮົາຈະປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບສະພາບການເຮັດວຽກຂອງບຸກຄະລາກອນເມື່ອເຮັດວຽກໃຫ້ນິຄອນ ລວມເຖິງສົ່ງເສີມສຸຂະພາບ ແລະ ຄວາມປອດໄພເພື່ອສ້າງສຸຂະພາບ ແລະ ສະພາບແວດລ້ອມໃນການເຮັດວຽກທີ່ປອດໄພສຳລັບບຸກຄະລາກອນທຸກນ.

[4] ນິຄອນມຸ່ງໝັ້ນທີ່ຈະສົ່ງເສີມໃຫ້ບຸກຄະລາກອນສ້າງຄວາມສົມດຸນລະຫວ່າງການເຮັດວຽກກັບການດຳເນີນຊີວິດສ່ວນຕົວ.

[5] ນິຄອນສ້າງໂອກາດການຈ້າງແຮງງານທີ່ເທົ່າທຽມກັບ ແລະ ເປັນທຳ ພວກເຮົາຈະບໍ່ເລືອກປະຕິບັດບົນຄວາມແຕກຕ່າງຂອງເຊື້ອຊາດ, ສີຜິວ, ເພດ,ສັນຊາດ, ອາຍຸ, ສາສະໜາ, ຄຸນລັກສະນະ ຫຼືລັກສະນະອື່ນໆໃດໜຶ່ງ ຕາມທີ່ກົດໝາຍກຳນົດໄວ້.

## 4. ປົກປ້ອງສິ່ງແວດລ້ອມທາງທຳມະຊາດ.

[1] ນິຄອນຈະເສີມສ້າງຄວາມຄຳນຶງເຖິງດ້ານສິ່ງແວດລ້ອມຂອງບຸກຄະລາກອນ ເພື່ອສ້າງສັງຄົມທີ່ຍືນຍົງ. ພວກເຮົາຈະດຳເນີນທຸລະກິດດ້ວຍຄວາມເຄົາລົບຕໍ່ສິ່ງແວດລ້ອມ.

[2] ພວກເຮົາຈະມຸ່ງໝັ້ນໃນການທີ່ຈະຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມໃນທຸກຂັ້ນຕອນຂອງການດຳເນີນທຸລະກິດຂອງພວກເຮົາ ຕັ້ງແຕ່ການສະໜອງວັດຖຸດິບເພື່ອການພັດທະນາຜະລິດຕະພັນ, ການຜະລິດ, ການຂົນສົ່ງ,ການຈຳໜ່າຍ, ການໃຊ້ບໍລິການ ຈົນເຖິງການກຳຈັດໃນຂັ້ນຕອນສຸດທ້າຍ ແລະຈະສ້າງສາຜະລິດຕະພັນ ແລະ ບໍລິການທີ່ເປັນມິດຕໍ່ສິ່ງແວດລ້ອມ.

[3] ພວກເຮົາຈະປະຕິບັດຕາມກົດໝາຍ ແລະ ລະບຽບການດ້ານສິ່ງແວດລ້ອມທີ່ກ່ຽວຂ້ອງ ແລະ ມຸ່ງໝັ້ນທີ່ຈະໃຊ້ ແລະ ຈັດການສານເຄມີ ແລະ ຫຼຸດຜ່ອນຂີ້ເຫຍື້ອຢ່າງເໝາະສົມ. ນອກຈາກນີ້, ພວກເຮົາຈະພະຍາຍາມຫຼຸດຜ່ອນການປ່ອຍກ໊າສຄາບອນໄດອອກຊາຍຢ່າງເອົາໃຈໃສ່ ເຊັ່ນ: ການໃຊ້ພະລັງງານຢ່າງມີປະສິດທິພາບ ແລະ ການປົກປັກພະລັງງານ.

[4] ພວກເຮົາຈະມຸ່ງໝັ້ນໃນການປົກປັກຊັບພະຍາກອນ. ການນຳໃຊ້ຊັບພະຍາກອນຢ່າງມີປະສິດທິພາບ. ການນຳໃຊ້ຊ້ຳຊ້ອນ ແລະ ການນຳກັບມານຳໃຊ້ໃໝ່ ເພື່ອນຳໃຊ້ຊັບພະຍາກອນທີ່ມີຢູ່ຢ່າງຍືນຍົງ.

## 5. ດຳເນີນທຸລະກິດຢ່າງຖືກຕ້ອງຊອບທຳ.

### (1) ການຕໍ່ຕ້ານການໃຫ້ສິນບົນ ແລະ ການຮັບສິນບົນ ແລະ ການຕໍ່ຕ້ານການທຸຈະລິດ.

[1] ນິຄອນມີຈຸດຢືນທີ່ຕໍ່ຕ້ານການໃຫ້ ແລະ ຮັບສິນບົນ ແລະ ການທຸຈະລິດຢ່າງເດັດຂາດ ແລະຈະພະຍາຍາມຢ່າງເຕັມທີ່ເພື່ອປົກປ້ອງບໍ່ໃຫ້ເກີດມີການໃຫ້ສິນບົນ ແລະ ຮັບສິນບົນ ແລະ ການການທຸຈະລິດ.

[2] ພວກເຮົາຈະຫຼີກລ່ຽງພຶດຕິກຳທີ່ອາດເຮັດໃຫ້ເກີດຂໍ້ສົງໄສກ່ຽວກັບການໃຫ້ ແລະ ຮັບສິນບົນ.

[3] ພວກເຮົາຍຶດໝັ້ນໃນການເປັນຜູ້ ທີ່ມີສ່ວນຮ່ວມໃນສັງຄົມທີ່ມີຄວາມຮັບຜິດຊອບໃນທຸກປະເທດ ແລະ ພູມິພາກທີ່ນິຄອນດຳເນີນທຸລະກິດຢູ່ ໂດຍການຮັກສາຄວາມສຳພັນທີ່ດີ ແລະ ຈິງໃຈກັບໜ່ວຍງານພາກລັດ ແລະ ເຈົ້າໜ້າທີ່ຂອງລັດ. ພວກເຮົາຈະປະຕິບັດຕາມກົດໝາຍ ແລະ ລະບຽບການຕ່າງໆ ແລະ ຫຼີກລ່ຽງການທຸຈະລິດ.

### (2) ຄວາມສຳພັນກັບຜູ້ສະໜອງ ແລະ ຄູ່ຄ້າຂາຍທາງທຸລະກິດ.

[1] ພວກເຮົາຈະເລືອກຜູ້ສະໜອງ ແລະ ຄູ່ຄ້າຂາຍທາງທຸລະກິດຢ່າງເໝາະສົມ ແລະ ເປັນທຳ ຕາມຜົນງານ, ຊື່ສຽງ ແລະ ຄຸນນະພາບຂອງການໃຫ້ບໍລິການ. ຄວາມສຳພັນຂອງພວກເຮົາກັບຜູ້ສະໜອງ ແລະ ຄູ່ຄ້າຂາຍທາງທຸລະກິດຈະຢູ່ບົນຄວາມຖືກຕ້ອງຕາມກົດໝາຍ ແລະ ການປະຕິບັດຕໍ່ກັນຢ່າງເປັນມິດ, ມີຜົນສັກສິດ ແລະ ເປັນທຳ.

[2] ພວກເຮົາຈະບໍ່ໃຊ້ຕຳແໜ່ງທາງທຸລະກິດຂອງນິຄອນບັງຄັບນາບຂູ່ໃຫ້ຜູ້ສະໜອງ ແລະ ຄູ່ຄ້າຂາຍທາງທຸລະກິດຕົກຢູ່ໃນສະພາບທີ່ຕ້ອງຜິດຈັນຍາບັນ ຫຼື ເກີດການອັບປະໂຫຍດ ໂດຍເຂົ້າໄປມີສ່ວນໃນການທຸຈະລິດ ຫຼື ສະແຫວງຫາຜົນປະໂຫຍດສ່ວນຕົວ.

[3] ນິຄອນຄາດຫວັງໃຫ້ຜູ້ສະໜອງ ແລະ ຄູ່ຄ້າຂາຍທາງທຸລະກິດຂອງພວກເຮົາປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂຂອງຂໍ້ຕົກລົງຕາມສັນຍາ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການຂອງແຕ່ລະປະເທດທີ່ເຮົາເຂົ້າໄປດຳເນີນທຸລະກິດ.

### (3) ຄວາມຮັບຜິດຊອບຕໍ່ສັງຄົມໃນຕ່ອງໂສ້ອຸປະທານ.

ຄວາມຕັ້ງໃຈຈິງຂອງພວກເຮົາປະການໜຶ່ງ ຄື ການສົ່ງເສີມຄວາມຮັບຜິດຊອບຕໍ່ສັງຄົມໃນຕ່ອງໂສ້ອຸປະທານຂອງນິຄອນ. ພວກເຮົາຄາດຫວັງໃຫ້ຜູ້ສະໜອງ ແລະ ຄູ່ຄ້າຂາຍທາງທຸລະກິດຂອງພວກເຮົາຍຶດໝັ້ນໃນການປະພຶດຕາມຈັນຍາບັນທຸລະກິດເຊັ່ນດຽວກັບທີ່ນິຄອນປະຕິບັດ ຕາມທີ່ລະບຸໄວ້ໃນຫຼັກຈັນຍາບັນ. ນອກຈາກນີ້, ພວກເຮົາຍັງຄາດຫວັງໃຫ້ຜູ້ສະໜອງ ແລະ ຄູ່ຄ້າຂອງພວກເຮົາຮັກສາມາດຕະຖານຕົ້ນຕໍທີ່ກຳນົດໄວ້ໃນຈັນຍາບັນສະບັບນີ້ ລວມເຖິງນະໂຍບາຍຂອງນິຄອນທີ່ກ່ຽວຂ້ອງກັບການປະຕິບັດຕາມກົດໝາຍ ເຄົາລົບໃນສິດທິມະນຸດ, ສ້າງສະພາບແວດລ້ອມທີ່ດີໃນການເຮັດວຽກ, ປົກປ້ອງສະພາບແວດລ້ອມທາງທຳມະຊາດ ລວມເຖິງ ການສ້າງສາຜະລິດຕະພັນ ແລະ ບໍລິການທີ່ມີຄວາມປອດໄພ.

### (4) ການລ້ຽງຮັບຮອງ ແລະ ຂອງທີ່ລະລຶກ.

[1] ໃນການດຳເນີນກິດຈະກຳທາງທຸລະກິດໃຫ້ກັບນິຄອນ ພວກເຮົາຈະປະຕິບັດຕາມກົດໝາຍ ແລະ ລະບຽບການ ລວມເຖິງນະໂຍບາຍຂອງນິຄອນທີ່ກ່ຽວຂ້ອງກັບການລ້ຽງຮັບຮອງ ແລະ ການໃຫ້ ແລະ ຮັບຮອງຂອງທີ່ລະລຶກຈາກລູກຄ້າ, ຜູ້ສະໜອງ, ຄູ່ຄ້າຂາຍທາງທຸລະກິດ ແລະ ຜູ້ທີ່ເຮັດທຸລະກິດຮ່ວມກັບພວກເຮົາ. ພວກເຮົາຈະມີສ່ວນໃນການລ້ຽງຮັບຮອງທາງທຸລະກິດ, ການໃຫ້ ແລະ ຮັບຂອງທີ່ລະລຶກເທົ່າທີ່ຈຳເປັນ ແລະ ສົມເຫດສົມຜົນ ພາຍໃຕ້ບັນທັດຖານທາງທຸລະກິດ ແລະ ຈະປຶກສາຜູ້ບັງຄັບບັນຊາທັນທີຫາກມີຂໍ້ສົງໄສວ່າພຶດຕິກຳດັ່ງກ່າວເໝາະສົມ ຫຼື ບໍ່.

[2] ພວກເຮົາຈະບໍ່ສະເໜີການລ້ຽງຮັບຮອງ ຫຼື ຂອງທີ່ລະລຶກໃຫ້ກັບລູກຄ້າ ຫຼື ຜູ້ອື່ນທີ່ກຳລັງເຮັດທຸລະກິດ ຫຼື ພະຍາຍາມເຂົ້າເລີ່ມເຮັດທຸລະກິດກັບນິຄອນ ເພື່ອແລກກັບຄວາມຊ່ວຍເຫຼືອ ຫຼື ອຳນາດໃນການຕັດສິນໃຈ ຫຼື ເມື່ອເຂົ້າໃຈວ່າຄວາມຊ່ວຍເຫຼືອ ຫຼື ອຳນາດດັ່ງກ່າວຈະຊ່ວຍໃຫ້ເກີດຄວາມເຊື່ອມໂຍງກັບທຸລະກຳໃດໜຶ່ງທີ່ສົ່ງຜົນຕໍ່ນິຄອນ ພວກເຮົາຈະບໍ່ຍອມຮັບການລ້ຽງຮັບຮອງ ແລະ ຂອງທີ່ລະລຶກຈາກຜູ້ສະໜອງ, ຄູ່ຄ້າຂາຍທາງທຸລະກິດ ຫຼື ຜູ້ອື່ນທີ່ກຳລັງເຮັດທຸລະກິດ ຫຼື ພະຍາຍາມເຂົ້າມາເລີ່ມເຮັດທຸລະກິດກັບນິຄອນພາຍໃຕ້ສະຖານະການທີ່ອາດຖືກຕີຄວາມໄດ້ວ່າມີຜົນກະທົບຕໍ່ການຕັດສິນໃຈໃນການດຳເນີນທຸລະກິດທີ່ກ່ຽວຂ້ອງກັບນິຄອນ.

[3] ພວກເຮົາຈະລາຍງານການລ້ຽງຮັບຮອງ ແລະ ການໃຫ້ ແລະ ຮັບຮອງຂອງທີ່ລະລຶກ ຕໍ່ຜູ້ບັງຄັບບັນຊາ ແລະ ຈະປະຕິບັດຕາມນະໂຍບາຍທີ່ກ່ຽວຂ້ອງທີ່ບໍລິສັດກຳນົດໄວ້.

### (5) ການແລ່ນເຕັ້ນ ແລະ ການບໍລິຈາກສະໜັບສະໜູນກິດຈະກຳທາງການເມືອງ.

ນິຄອນຈະປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງກັບການແລ່ນເຕັ້ນ ແລະ ການມີສ່ວນຮ່ວມທາງການເມືອງໃນປະເທດທີ່ນິຄອນດຳເນີນທຸລະກິດຢູ່.

**(6) ການແຂ່ງຂັນ ແລະ ການດຳເນີນທຸລະກິດຢ່າງເປັນທຳ.**

[1] ພວກເຮົາຈະແຂ່ງຂັນຢ່າງຈິງຈັງໃນຕະຫຼາດບົນຫຼັກການຂອງການແຂ່ງຂັນທີ່ເປັນທຳ ແລະ ເສລີ ແລະ ປະຕິບັດຕາມກົດໝາຍການຕໍ່ຕ້ານການຜູກຂາດ ແລະ ກົດໝາຍທີ່ກ່ຽວຂ້ອງກັບການແຂ່ງຂັນທາງການຄ້າ ອື່ນໆ ໃນທຸກໆ ບ່ອນທີ່ພວກເຮົາໄດ້ດຳເນີນທຸລະກິດ.

[2] ພວກເຮົາຈະບໍ່ເຂົ້າຂໍ້ຕົກລົງໃດໜຶ່ງ ບໍ່ວ່າຈະແບບເປັນທາງການ ຫຼື ບໍ່ເປັນທາງການ ເປັນລາຍລັກອັກສອນ ຫຼື ດ້ວຍວາຈາ ກັບຄູ່ແຂ່ງທີ່ກຳນົດລາຄາສິນຄ້າ ຫຼື ບໍລິການຢ່າງບໍ່ເປັນທຳ, ຄູ່ແຂ່ງທີ່ກຳນົດການແບ່ງສ່ວນ ຕະຫຼາດ ຫຼື ການແບ່ງສ່ວນລູກຄ້າ, ຄູ່ແຂ່ງທີ່ແຊກແຊງການແຂ່ງຂັນເສລີ ຫຼື ຂັດຂວາງການຊື້ຂາຍໂດຍບໍ່ ມີເຫດຜົນອັນຄວນ.

[3] ພວກເຮົາເຄົາລົບໃນສັນຍາທີ່ນິຄອນເຮັດກັບລູກຄ້າ, ຜູ້ສະໜອງ ແລະ ຄູ່ຄ້າຂາຍທາງທຸລະກິດ ດ້ວຍການ ປະຕິບັດຕາມເງື່ອນໄຂຂອງສັນຍາດັ່ງກ່າວ.

[4] ພວກເຮົາຈະຫຼີກລ້ຽງການປະຕິບັດໃດໜຶ່ງ ທີ່ອາດກໍ່ໃຫ້ເກີດ ຫຼື ກໍ່ໃຫ້ເກີດຜົນປະໂຫຍດຂັດກັນ. ພວກເຮົາຈະບໍ່ເຂົ້າຮ່ວມໃນກິດຈະກຳໃດໜຶ່ງທີ່ສ້າງຄວາມເສຍຫາຍຕໍ່ຊື່ສຽງ ຫຼື ຜົນປະໂຫຍດຂອງນິຄອນ ເພື່ອສ້າງປະໂຫຍດສ່ວນຕົວ ຫຼື ບຸກຄົນສາມ. ພວກເຮົາຈະພະຍາຍາມຫຼີກລ້ຽງສະຖານະການທີ່ເຮັດໃ ຫ້ເກີດຄວາມຂັດແຍ່ງລະຫວ່າງຜົນປະໂຫຍດຂອງນິຄອນ ກັບ ຜົນປະໂຫຍດຂອງບຸກຄະລາກອນ ຫຼື ຄອບຄົວ.

**(7) ການຄວບຄຸມການນຳເຂົ້າ ແລະ ສົ່ງອອກ.**

ໃນການດຳເນີນທຸລະກຳລະຫວ່າງປະເທດ ບໍ່ວ່າຈະເປັນທຸລະກຳທີ່ກ່ຽວຂ້ອງກັບສິ່ງທີ່ຈັບ ຕ້ອງໄດ້ ຫຼື ຈັບຕ້ອງບໍ່ໄດ້ ເຊັ່ນ: ຜະລິດຕະພັນ ຫຼື ສ່ວນປະກອບ ຫຼື ຂໍ້ມູນທາງເຕັກນິກ ພວກເຮົາຈະປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບການຄວບຄຸມການສົ່ງອອກ, ການສົ່ງຄືນ ແລະ ການຄວບຄຸມການນຳເຂົ້າ ແລະ ແຈ້ງຂໍ້ມູນທີ່ເປັນຈິງໃນການດຳເນີນຂັ້ນຕອນໃນການສົ່ງ ອອກ ແລະ ນຳເຂົ້າຕໍ່ໜ່ວຍງານທີ່ກ່ຽວຂ້ອງ.

**(8) ພາສີອາກອນ.**

ນິຄອນເປັນຜູ້ທີ່ມີສ່ວນຮ່ວມໃນສັງຄົມທີ່ຮັບຜິດຊອບໃນການປະຕິບັດຕາມກົດໝາຍ ແລະ ລະບຽບການ ດ້ານພາສີອາກອນທີ່ກ່ຽວຂ້ອງ. ພວກເຮົາສະໜັບສະໜູນການເຈລະຈາທີ່ເປີດກວ້າງ ແລະ ຈິງໃຈລະຫວ່າງ ເຈົ້າໜ້າທີດ້ານພາສີອາກອນຂອງລັດ ແລະ ທຸລະກິດ ແລະ ຈະພະຍາຍາມຢ່າງຕັ້ງໜ້າ ທີ່ຈະແກ້ໄຂບັນຫາ ຫຼື ຂໍ້ຂັດແຍ່ງ ຫາກມີຄວາມເຫັນທີ່ແຕກຕ່າງກັບເຈົ້າໜ້າທີ່ຂອງລັດ.

**(9) ການປ້ອງກັນການນຳໃຊ້ຜົນປະໂຫຍດຈາກຂໍ້ມູນພາຍໃນເພື່ອການຊື້ຂາຍຫຼັກຊັບ.**

ພວກເຮົາຈະບໍ່ເຮັດການຊື້ຂາຍຫຼັກຊັບໂດຍໃຊ້ຂໍ້ມູນພາຍໃນທີ່ເປັນຄວາມລັບ ເຊິ່ງເປັນຂໍ້ມູນທີ່ບໍ່ເປີດເຜີຍຕໍ່ ສາທາລະນະ.

**(10) ການນຳໃຊ້ ແລະ ການຈັດການຊັບສິນຂອງນິຄອນຢ່າງເໝາະສົມ.**

ພວກເຮົາຈະຮັບຜິດຊອບຕໍ່ການນຳໃຊ້ ແລະ ການຈັດການຊັບສິນຂອງນິຄອນຢ່າງເໝາະສົມ ເຊິ່ງລວມ ເຖິງສິ່ງອຳນວຍຄວາມສະດວກ, ອຸປະກອນ, ເງິນ, ສິນຄ້າຄ້າງສາງ, ຜະລິດຕະພັນ, ຂໍ້ມູນຂ່າວສານ, ຊັບສິນທາງປັນຍາ ແລະ ຊອບແວ ແລະ ຈະດຳເນີນການຕາມຂັ້ນຕອນທີ່ເໝາະສົມເພື່ອໃຫ້ໝັ້ນໃຈໄດ້ ວ່າຊັບສິນຂອງນິຄອນຈະໄດ້ຮັບການປົກປ້ອງຈາກການສູນຫາຍ, ການຖືກທຳລາຍ, ການລັກຂະໂມຍ, ການເປ່ເພ ຫຼື ຖືກນຳໃຊ້ຜິດວັດຖຸປະສົງ ພວກເຮົາຈະບໍ່ນຳໃຊ້ຊັບສິນຂອງນິຄອນເພື່ອຈຸດປະສົງສ່ວນຕົວ ຫຼື ຈຸດປະສົງທີ່ທຸຈະລິດ.

**(11) ການປົກປ້ອງສິດດ້ານຊັບສິນທາງປັນຍາ.**

[1] ພວກເຮົາຄຳນຶງສະເໝີວ່າຊັບສິນທາງປັນຍາຂອງນິຄອນ ເຊັ່ນ: ສິດທິບັດ, ສິດທິບັດການອອກແບບ, ເຄື່ອງໝາຍການຄ້າ, ລິຂະສິດ ແລະ ຄວາມລັບທາງການຄ້າເປັນຊັບສິນອັນລ້ຳຄ່າຂອງນິຄອນທີ່ຕ້ອງໄດ້ຮັບ ການປົກປ້ອງໃນທຸກເວລາ. ພວກເຮົາຈະຮ່ວມກັນສ້າງ, ປົກປ້ອງ ແລະ ນຳໃຊ້ຜົນປະໂຫຍດຈາກສິດດ້ານ ຊັບສິນທາງປັນຍາຂອງນິຄອນ. ພວກເຮົາບໍ່ອະນຸຍາດໃຫ້ ບຸກຄົນທີ່ສາມນຳໃຊ້ຊັບສິນທາງປັນຍາຂອງ ນິຄອນ ໂດຍບໍ່ມີຄຳຍິນຍອມ ແລະ ການອະນຸມັດຈາກນິຄອນ.

[2] ພວກເຮົາເຄົາລົບໃນສິດແຫ່ງຊັບສິນທາງປັນຍາຂອງຜູ້ອື່ນ  ແລະ ຈະບໍ່ລະເມີດ ຫຼື ນຳໃຊ້ສິດດ້ານຊັບສິນ ທາງປັນຍາຂອງຜູ້ອື່ນ ເຊັ່ນ: ສິດທິບັດ, ສິດທິບັດການອອກແບບ, ເຄື່ອງໝາຍການຄ້າ, ລິຂະສິດ ແລະ ອື່ນໆ ພວກເຮົາຈະປະຕິບັດຢ່າງເໝາະສົມ ແລະ ຖືກຕ້ອງຕາມກົດໝາຍຫາກຕ້ອງການນຳໃຊ້ຂໍ້ມູນຈາກ ຊັບສິນທາງປັນຍາຂອງຜູ້ອື່ນ.

**(12) ການສື່ສານຢ່າງມີປະສິດທິພາບ ແລະ ຈິງໃຈ**

[1] ພວກເຮົາຈະເຮັດໃຫ້ທຸກຄົນເຊື່ອໝັ້ນວ່າການສື່ສານຈາກນິຄອນ ບໍ່ວ່າຈະເປັນສື່ສິ່ງພິມ, ການໂຄສະນາ, ການປະຊາສຳພັນດ້ານການຕະຫຼາດ ແລະ ສິ່ງເສີມການຂາຍ ແລະ ການລາຍງານຕ່າງໆ ໄດ້ຖືກຈັດຂຶ້ນຢ່າງຖືກຕ້ອງ ໃຫ້ຂໍ້ມູນທີ່ຈະບໍ່ເຮັດໃຫ້ເກີດການເຂົ້າໃຈຜິດ ແລະ ບໍ່ມີການຊີ້ນຳໃນທາງທີ່ຜິດ ແລະ ຈະບໍ່ລະເມີດສິດຂອງບຸກຄົນອື່ນ.

[2] ພວກເຮົາຈະຫຼີກລ້ຽງການນຳໃຊ້ສື່ໂຄສະນາ ເຊິ່ງອາດຈະມີເນື້ອໃນທີ່ເປັນການທຳລາຍຄວາມສະຫງົບ,

ຄວາມເປັນລະບຽບຮຽບຮ້ອຍ ແລະ ສິລະທຳຂອງສ່ວນລວມ ຫຼື ສິ່ງຜົນກະທົບໃນທາງລົບຕໍ່ສັງຄົມ.

**(13) ການຈັດການຂໍ້ມູນຂ່າວສານຢ່າງເໝາະສົມ.**

[1] ພວກເຮົາຈະດຳເນີນການດ້ານການຮັກສາຄວາມປອດໄພຂອງຂໍ້ມູນ ເພື່ອເກັບຮັກສາຂໍ້ມູນຂ່າວສານທີ່ເປັນຄວາມລັບ. ພາລະຜູກພັນໃນການຮັກສາຄວາມລັບນັ້ນຈະຄົງຢູ່ເຖິງແມ່ນວ່າຈະສິ້ນສຸດ ການເປັນບຸກຄະລາກອນຂອງນິຄອນໄປແລ້ວກໍ່ຕາມ. ພວກເຮົາຈະບໍ່ນຳຂໍ້ມູນຂ່າວສານທີ່ເປັນຄວາມລັບນັ້ນໄປນຳໃຊ້ເພື່ອຜົນປະໂຫຍດເພື່ອຈຸດປະສົງສ່ວນຕົວ.

[2] ພວກເຮົາຈະປະມວນຜົນຂໍ້ມູນສ່ວນບຸກຄົນດ້ວຍຄວາມເປັນທຳ ແລະ ຖືກຕ້ອງຕາມວັດຖຸປະສົງທີ່ລະບຸໄວ້ ແລະ ຕາມກົດໝາຍທີ່ບັງຄັບໃຊ້.

[3] ພວກເຮົາຈະຈັດການຂໍ້ມູນຂ່າວສານທາງທຸລະກິດ ລວມເຖິງ ຂໍ້ມູນສ່ວນບຸກຄົນຢ່າງເໝາະສົມຕາມລະດັບຄວາມລັບຂອງຂໍ້ມູນ ເພື່ອຫຼີກລ້ຽງຄວາມເສຍຫາຍ ແລະ ການຮົ່ວໄຫຼຂອງຂໍ້ມູນ.

## 6. ເປີດເຜີຍຂໍ້ມູນທີ່ຖືກຕ້ອງ ແລະ ໂປ່ງໃສ.

[1] ພວກເຮົາຈະເປີດເຜີຍຂໍ້ມູນທີ່ຖືກຕ້ອງ ໃນເວລາທີ່ເໝາະສົມ.

[2] ນິຄອນຈະຍຶດໝັ້ນໃນການລາຍງານຂໍ້ມູນທາງທຸລະກິດຢ່າງຖືກຕ້ອງ. ພວກເຮົາຈະປະຕິບັດຕາມຫຼັກການບັນຊີທີ່ຮັບຮອງທົ່ວໄປ ບົນພື້ນຖານຂອງຂໍ້ເທັດຈິງ ເພື່ອເປີດເຜີຍຂໍ້ມູນທີ່ຖືກຕ້ອງທັນເວລາ ແລະ ເພື່ອໃຫ້ສອດຄ່ອງກັບໜ້າທີ່ຕາມກົດໝາຍ ເຊັ່ນ: ການຊຳລະພາສີ. ພວກເຮົາຈະບໍ່ປະຕິບັດການດ້ານບັນຊີທີ່ບໍ່ເໝາະສົມ ບໍ່ວ່າເພື່ອຜົນປະໂຫຍດໃນການສ້າງຜົນກຳໄລ, ສ້າງຍອດຂາຍໃຫ້ໄດ້ຕາມເປົ້າໝາຍ, ຫຼຸດຜ່ອນລາຍຈ່າຍ ຫຼື ເຫດຜົນອື່ນໃດກໍ່ຕາມ.

## 7. ການສ້າງສາຜະລິດຕະພັນ ແລະ ບໍລິການທີ່ມີຄຸນຄ່າ.

[1] ນິຄອນຈະມຸ່ງໝັ້ນເພື່ອຄັດສ້າງຜະລິດຕະພັນ ແລະ ບໍລິການທີ່ເປັນປະໂຫຍດໃຫ້ກັບສັງຄົມເພື່ອຕອບສະໜອງຄວາມຄາດຫວັງ ແລະ ຄວາມຕ້ອງການຂອງລູກຄ້າ.

[2] ພວກເຮົາຈະພະຍາຍາມໃຫ້ຂໍ້ມູນທີ່ຖືກຕ້ອງ ແລະ ເປັນປະໂຫຍດ ເຊິ່ງສາມາດເຂົ້າໃຈໄດ້ໂດຍງ່າຍຕໍ່ລູກຄ້າ ເພື່ອໃຫ້ລູກຄ້າໃຊ້ໃນການຕັດສິນໃຈຢ່າງເໝາະສົມ ພ້ອມກັນນັ້ນ, ພວກເຮົາຈະຕອບສະໜອງຕໍ່ຄຳຖາມຫຼື ຄຳຮ້ອງຂໍຂອງລູກຄ້າຢ່າງໄວວາ ແລະ ຊື່ສັດ.

[3] ພວກເຮົາຍຶດໝັ່ນໃນການໃຫ້ຄວາມສຳຄັນກັບຄວາມປອດໄພ ແລະ ຄຸນນະພາບຂອງຜະລິດຕະພັນ ແລະ ບໍລິການຂອງນິຄອນຢ່າງດີທີ່ສຸດ.

[4] ພວກເຮົາຈະນຳສະເໜີຄູ່ມືການໃຊ້ງານ ແລະ ຂໍ້ມູນທີ່ກ່ຽວຂ້ອງອື່ນໆ ໃນຮູບແບບທີ່ສາມາດເຂົ້າ ໃຈໄດ້ໂດຍງ່າຍເພື່ອໃຫ້ຜະລິດຕະພັນ ແລະ ການບໍລິການຂອງພວກເຮົາສາມາດຖືກນຳໄປໃຊ້ກັບວຽກງານໄດ້ຢ່າງເໝາະສົມ ແລະ ປອດໄພ.

[5] ໃນກໍລະນີທີ່ເກີດບັນຫາດ້ານຄວາມປອດໄພ ນິຄອນຈະໃຊ້ມາດຕະການທີ່ເໝາະສົມ ເຊັ່ນ: ການຮຽກຄືນຜະລິດຕະພັນຢ່າງທັນທີ ແລະ ຈະພະຍາຍາມປ້ອງກັນບໍ່ໃຫ້ເກີດເຫດການຂຶ້ນອີກເທື່ອໃໝ່.

## 8. ສ້າງສຳພັນທີ່ດີກັບຊຸມຊົນ.

[1] ພວກເຮົາເຄົາລົບ ແລະ ເຂົ້າໃຈວັດຖະນະທຳ, ຄ່ານິຍົມ, ຂະນົບທຳນຽມປະເພນີຂອງຊຸມຊົນໃນແຕ່ລະພື້ນທີ່ທີ່ນິຄອນເຂົ້າໄປດຳເນີນທຸລະກິດ.

[2] ນິຄອນພ້ອມສະເໜີທີ່ຈະມີສ່ວນຮ່ວມກັບກິດຈະກຳເພື່ອສັງຄົມ ແລະ ຊຸມຊົນ ແລະ ກິດຈະກຳຕ່າງໆເພື່ອຜົນປະໂຫຍດແກ່ສາທາລະນະ. ນິຄອນຈະປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງໃນແຕ່ລະປະເທດທີ່ພວກເຮົາເຂົ້າໄປດຳເນີນທຸລະກິດທີ່ກ່ຽວເນື່ອງກັບການບໍລິຈາກ ແລະ ການຊ່ວຍເຫຼືອລ້າ.

[3] ພວກເຮົາຈະໃຫ້ຄວາມຮ່ວມມືເພື່ອຮັກສາຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຈະບໍ່ເຂົ້າໄປກ່ຽວຂ້ອງກັບການກະທຳທີ່ອາດຈະກໍ່ໃຫ້ເກີດການຕໍ່ຕ້ານສັງຄົມ.

## ລະບົບການລາຍງານ ແລະ ການປຶກສາຫາລື ແລະ ຜົນຂອງການຝ່າຝືນ.

ພວກເຮົາມີໜ້າທີ່ທີ່ຈະຕ້ອງລາຍງານການຝ່າຝືນຫຼັກຈັນຍາບັນ ຫຼື ແນວໂນ້ມທີ່ນ່າຈະເກີດມີການຝ່າຝືນຫຼັກຈັນຍາບັນ.

[1] ລະບົບການລາຍງານ ແລະ ການປຶກສາຫາລື.
ຫາກພົບວ່າມີການຝ່າຝືນຕໍ່ຫຼັກຈັນຍາບັນ ຫຼື ມີແນວໂນ້ມທີ່ຈະເກີດມີການຝ່າຝືນຫຼັກຈັນຍາບັນບຸກຄະລາກອນຈະຕ້ອງລາຍງານ ຫຼື ປຶກສາຫາລືກັບຫົວໜ້າຄຸມງານ ແລະ/ຫຼື ລາຍງານຜ່ານໜ່ວຍງານທີ່ຮັບລາຍງານ ແລະ ການປຶກສາຫາລື (ຫຼື ລາຍງານຜ່ານລະບົບການຮັບລາຍງານ ແລະ ການປຶກສາຫາລືທີ່ໃຊ້ຢູ່ໃນແຕ່ລະບໍລິສັດ) ຫຼື ລາຍງານໄປຍັງບຸກຄົນ ຫຼື ໜ່ວຍງານທີ່ມີໜ້າທີ່ຮັບຜິດຊອບໃນເລື່ອງນີ້. ຫາກມີຂໍ້ສົງໄສ ຫຼື ຄຳຖາມ ບຸກຄະລາກອນຕ້ອງປຶກສາຫາລືກັບຫົວໜ້າຄຸມງານ ຫຼື ຜູ້ຮັບຜິດຊອບດ້ານການຮັກສາຫຼັກການຄຸ້ມຄອງບໍລິຫານຂອງບໍລິສັດທີ່ຕົນສັງກັດຢູ່.

[2] ການບໍ່ດຳເນີນການຕອບໂຕ້.
ບຸກຄະລາກອນທີ່ເປັນຜູ້ລາຍງານການຝ່າຝືນຫຼັກຈັນຍາບັນ ຫຼື ການມີແນວໂນ້ມວ່າອາດຈະເກີດມີການຝ່າຝືນຫຼັກຈັນຍາບັນ ຈະບໍ່ໄດ້ຮັບການຕອບໂຕ້ ຫຼື ມີຜົນກະທົບໃດໜຶ່ງຈາກການລາຍງານເລື່ອງດັ່ງກ່າວ.

[3] ກໍລະນີທີ່ນິຄອນໄດ້ຮັບການແຈ້ງເບາະແສການຝ່າຝືນຫຼັກຈັນຍາບັນ ຫຼື ການມີແນວໂນ້ມວ່າອາດຈະເກີດ

ມີການຝ່າຝືນຫຼັກຈັນຍາບັນ ນິຄອນຈະຮີບດຳເນີນການກວດສອບຂໍ້ເທັດຈິງ, ຫາວິທີການແກ້ໄຂ ແລະ ຫາມາດຕະການປ້ອງກັນການເກີດເຫດການຊ້ຳຢ່າງຮີບດ່ວນ.

[4] ຜົນຂອງການຝ່າຝືນ.

ການຝ່າຝືນຫຼັກຈັນຍາບັນ ຈະໄດ້ຮັບການລົງໂທດທາງວິໄນຈາກນິຄອນ ເຊິ່ງອາດເຖິງຂັ້ນການຍົກເລີກການຈ້າງແຮງງານ ແລະ ຫາກເປັນກໍລະນີທີ່ ຜິດກົດໝາຍ ນິຄອນອາດດຳເນີນການເພື່ອໃຫ້ເກີດຄວາມຮັບຜິດທາງແພ່ງ ຫຼື ທາງອາຍາອີກດ້ວຍ.

## ການບໍລິຫານຈັດການຫຼັກຈັນຍາບັນ

[1] ການກຳນົດ, ແກ້ໄຂ ແລະ ຍົກເລີກ.

ການກຳນົດ, ແກ້ໄຂ ແລະ ຍົກເລີກ “ຈັນຍາບັນນິຄອນ” ສາມາດເຮັດໄດ້ທຸກເມື່ອໂດຍນິຄອນ ຄໍໂປເຣຊັ່ນ ຈາກການນຳສະເໜີຂອງປະທານຄະນະກຳມະການດ້ານຈະລິຍະທຳຂອງອົງກອນ ແລະ ນຳຮ່າງຂໍ້ສະເໜີເຂົ້າສູ່ຄະນະກຳມະການບໍລິຫານຂອງນິຄອນ ຄໍໂປເຣຊັ່ນ ເຊິ່ງຈະເປັນຜູ້ຕັດສິນໃຈໃນຂັ້ນຕອນສຸດທ້າຍ ຫາກເປັນການປ່ຽນແປງພຽງເລັກໜ້ອຍສາມາດຕັດສິນໃຈໄດ້ເລີຍໂດຍປະທານຄະນະກຳມະການດ້ານຈະລິຍະທຳຂອງອົງກອນ.

[2] ຫາກພົບວ່າບໍລິບົດໃນຫຼັກຈັນຍາບັນຂັດຕໍ່ຫຼັກກົດໝາຍທ້ອງຖິ່ນ ນິຄອນຈະຍຶດຖືມາດຕະຖານທີ່ສູງກວ່າເປັນບ່ອນອີງຫຼັກສະເໝີ ຫາກມີຂໍ້ສົງໄສປະການໃດ ຂໍໃຫ້ບຸກຄະລາກອນປຶກສາຫາລືຮ່ວມກັບຫົວໜ້າຄຸມງານ ຫຼືຜູ້ຮັບຜິດຊອບດ້ານການເບິ່ງແຍງດູແລຂອງອົງກອນນັ້ນໆ ເພື່ອຊອກຫາແນວທາງແກ້ໄຂທີ່ເໝາະສົມ.